ມ:ຄ/ໜ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ

ເລກທີ:...2432......./ຍທຂ

ນະຄອນຫລວງວຽງຈັນ, ວັນທີ:..17.12.2010....

**ຮຽນ:** ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າຄະນະເລຂາທິການລັດຖະບານ ທີ່ນັບຖື.

**ເລື່ອງ:** ສະຫລຸບສັງລວມສະພາບການຈັດຕັ້ງປະຕິບັດວຽກຈຸດສຸມໃນເດືອນ 2/2010 ແລະສະເໜີແຜນວຽກປະຈຳເດືອນ 3/2010 ຂອງກະຊວງ ຍທຂ.

- ອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານ, ສະບັບເລກທີ 25/ຫຄລບ, ລົງວັນທີ 9/2/2010.

ກະຊວງໂຍທາທິການ ແລະຂົນສົ່ງ ຂໍຖືເປັນກຽດລາຍງານມາຍັງທ່ານ ກ່ຽວກັບການສະຫລຸບສັງລວມສະພາບພົ້ນເດັ່ນໃນການເຄື່ອນໄຫວປະຕິບັດວຽກງານ ແລະແກ້ໄຂບັນຫາສຳຄັນໃນເດືອນ 2/2010 ແລະ ສະເໜີແຜນວຽກປະຈຳເດືອນ 3/2010 ຂອງກະຊວງ ຍທຂ, ລາຍລະອຽດດັ່ງນີ້:

I. **<u>ສະພາບການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຍທຂ ໃນເດືອນ 1/2010.</u>**

ກ. **<u>ສະພາບລວມ.</u>**

ໃນໄລຍະໜຶ່ງເດືອນທີ່ຜ່ານມາ, ຂະແໜງ ຍທຂ ໄດ້ຈັດຕັ້ງປະຕິບັດແຜນການສົກປີ 2009-10 ຢ່າງຕັ້ງໜ້າ, ຊຶ່ງສະແດງອອກໃຫ້ເຫັນບາງດ້ານທີ່ພົ້ນເດັ່ນ ແລະບາງຂໍ້ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂໃນເດືອນຕໍ່ໄປດັ່ງນີ້:

ຂ. **<u>ສະພາບພົ້ນເດັ່ນ.</u>**

- ໄດ້ໄປເຄື່ອນໄຫວ ແລະຊີ້ນຳການປະຕິບັດວຽກງານຢູ່ແຂວງຫົວພັນ ແລະແຂວງຊຽງຂວາງ, ລະຫວ່າງວັນທີ 21-24/1/2010, ພ້ອມກັນນັ້ນ ໄດ້ສົມທົບກັບອຳນາດການປົກຄອງແຂວງຊຽງຂວາງ ປະກາດການແຕ່ງຕັ້ງຂັ້ນຫົວໜ້າພະແນກ ຍທຂ ແຂວງ.
- ໄດ້ໄປເຄື່ອນໄຫວ ແລະຊີ້ນຳການປະຕິບັດວຽກງານຢູ່ແຂວງໄຊຍະບູລີ ແລະໄດ້ເຂົ້າຮ່ວມການຈັດການແຂ່ງຂັນກິລາມິດຕະພາບຂອງຂະແໜງ ຍທຂ ໃນ 9 ແຂວງພາກເໜືອ, ລະຫວ່າງວັນທີ 26-27/1/2010.
- ສຳເລັດການຈັດພິທີມອບ-ຮັບ ແລະເປີດການນຳໃຊ້ຢ່າງເປັນທາງການຂົວທົ່ນເຫັບ, ຊຶ່ງໄດ້ຮັບທຶນຊ່ວຍເຫລືອລ້າຈາກລັດຖະບານຍີ່ປຸ່ນ, ໃນວັນທີ 28/1/2010.
- ໄດ້ຕ້ອນຮັບ ແລະພົບປະເຮັດວຽກກັບຄະນະຜູ້ແທນນັກທຸລະກິດຈາກນະຄອນຫລວງມົດສະກູ, ສະຫະພັນຣັດເຊຍ, ໃນວັນທີ 29/1/2010.
- ໄດ້ເຂົ້າຮ່ວມກອງປະຊຸມລັດຖະບານ, ລະຫວ່າງວັນທີ 2-3/2/2010.
- ໃນໂອກາດຄົບຮອບວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 61 ປີ, ໄດ້ເຂົ້າອວຍພອນກອງພົນທີ 2 ແລະກອງບັນຊາການທະຫານແຂວງໄຊຍະບູລີ, ລະຫວ່າງວັນທີ 4-5/2/2010.
- ໄດ້ຈັດປະຖະກະຖາ ເນື່ອງໃນໂອກາດຄົບຮອບວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 61 ປີ, ໃນວັນທີ 9/2/2010 ທີ່ກະຊວງ ຍທຂ, ໂດຍມີຜູ້ເຂົ້າຮ່ວມທັງໝົດ 125 ຄົນ (ຍິງ 39 ຄົນ).
- ໄດ້ເຂົ້າຮ່ວມສະເຫລີມສະຫລອງວັນສ້າງຕັ້ງກອງພົນທີ 1 ຄົບຮອບ 25 ປີ, ໃນວັນທີ 12/2/2010.

ຄ. ດ້ານວຽກງານວິຊາສະເພາະ.

- ຂົງເຂດຂົວທາງ:
  - ສໍາເລັດພິທີເຊັນສັນຍາໂຄງການກໍ່ສ້າງທາງແຕ່ຈີນາຍໄມ້-ຫາດດອກແກ້ວ-ບ້ານຫ້ອມ-ທ່ານາແລ້ງ ແລະຂົວຂ້າມນໍ້າຂອງເມືອງໂຂງ ແຂວງຈໍາປາສັກ ກັບບໍລິສັດກໍ່ສ້າງຂອງ ສປ ຈີນ, ໃນວັນທີ 11/1/2010.
  - ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການກໍ່ສ້າງຂົວທາງຕ່າງໆ:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 1/2010 | ປະຕິບັດໄດ້ 2/2010 | ໝາຍເຫດ |
|---|---|---|---|---|
| 1 | ໂຄງການກໍ່ສ້າງທາງ ADB10 (ທັງ 4 ສັນຍາ) | 82,32% | 84,57% | |
| 2 | ໂຄງການກໍ່ສ້າງທາງ ADB11 (ທັງ 4 ສັນຍາ) | 27,50% | 27,50% | (ບໍ່ຄືບໜ້າ) |
| 3 | ໂຄງການກໍ່ສ້າງທາງ 450 ປີ (ດົງໂຄກ-ດົງໂພສີ) | 49,90% | 49,90% | (ບໍ່ຄືບໜ້າ) |
| 5 | ໂຄງການກໍ່ສ້າງທາງເມືອງເງິນ-ປາກແບ່ງ | 86,94% | 86,94% | (ບໍ່ຄືບໜ້າ) |
| 6 | ໂຄງການກໍ່ສ້າງຂົວມິດຕະພາບແຫ່ງທີ 3 ຄໍາມ່ວນ-ນະຄອນພະນົມ | 27,47% | 31,42% | |
| 7 | ໂຄງການກໍ່ສ້າງທາງ 13 ເໜືອ (ນາເຕີຍ-ອຸດົມໄຊ) | 21,05% | 32,00% | |
| 8 | ໂຄງການຟື້ນຟູ ແລະສ້ອມແປງເສັ້ນທາງທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະໄພນໍ້າຖ້ວມ ສົກປີ 2008-09 ມີດັ່ງນີ້: | | | |
| | -ທາງເລກ 2E (ເມືອງຂວາ-ໃຕຈາງ) | 97,00% | 98,00% | |
| | -ທາງເລກທີ 14A | 42,00% | 45,00% | |
| | -ທາງເລກທີ 14B | 75,00% | 80,00% | |

- ຂົງເຂດຂົນສົ່ງທາງບົກ:
  - ໄດ້ສໍາເລັດການເກັບກໍາຂໍ້ມູນ ກ່ຽວກັບການເຄື່ອນໄຫວຂອງຫົວໜ່ວຍທຸລະກິດຂົນສົ່ງໂດຍສານຢູ່ແຂວງຫລວງພະບາງ, ເພື່ອຊຸກຍູ້ ແລະຖອດຖອນບົດຮຽນໃນການຄຸ້ມຄອງການຂົນສົ່ງໂດຍສານລະຫວ່າງແຂວງ ລະຫວ່າງປະເທດ ແລະການຄຸ້ມຄອງສະຖານີໃຫ້ມີປະສິດທິພາບກວ່າເກົ່າ.
  - ໄດ້ສໍາເລັດການສໍາຫລວດສາຍທາງຂົນສົ່ງລະຫວ່າງລາວ-ໄທ ໃນສາຍທາງປາກເຊ-ອຸບົນຣາຊະທານີ-ກຸງເທບ-ອຸບົນຣາຊະທານີ-ປາກເຊ, ໃນວັນທີ 12-16/2/2010.
  - ສໍາເລັດການຮ່າງລະບຽບການຂອງກອງເລຂາຄວາມປອດໄພທາງຖະໜົນ ເພື່ອສະເໜີຕໍ່ກອງປະຊຸມພົບປະລະຫວ່າງຄະນະກໍາມະການແຫ່ງຊາດດ້ານຄວາມປອດໄພທາງຖະໜົນ (ຄຊປທ) ແລະຄະນະກໍາມະການຄວາມປອດໄພທາງຖະໜົນຂັ້ນແຂວງ (ຄປທຂ) ເພື່ອຮັບຮອງເອົາ.

- ຂົງເຂດການບິນພົນລະເຮືອນ:
  - ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການປັບປຸງສະໜາມບິນຕ່າງໆ:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 1/2010 | ປະຕິບັດໄດ້ 2/2010 | ໝາຍເຫດ |
|---|---|---|---|---|
| 1 | **ໂຄງການປັບປຸງສະໜາມບິນຫລວງພະບາງ:** | | | |
| | - ວຽກຍົກຍ້າຍ ແລະເວນຄືນ | 30,00% | 100% | |
| | - ການອອກແບບສະໜາມບິນ | 100% | - | |
| | - ການອອກແບບອາຄານສະໜາມບິນ | 50,00% | 50,00% | |

| | | | | |
|---|---|---|---|---|
| 2 | ໂຄງການປັບປຸງສະໜາມບິນປາກເຊ: | 79,73% | 80,98% | |
| | - ໄດ້ອອກແຈ້ງການປິດສະໜາມບິນປາກເຊ ແຕ່ວັນທີ 10/2/2010-15/6/2010 | | | |

- **ກອງຄຸ້ມຄອງການຈະລາຈອນທາງອາກາດ:**
  - ¤ ສະຫລຸບສະຖິຕິການບິນຜ່ານ ແລະໜີ້ຕ້ອງຮັບ (ສຳລັບເດືອນ 12.2009) ມີດັ່ງນີ້:

| ລ/ດ | ລາຍລະອຽດ | ຈຳນວນຖ້ຽວບິນ | ຈຳນວນໜີ້ຕ້ອງຮັບ (USD) |
|---|---|---|---|
| 1 | ບັນຊາບິນຜ່ານເສັ້ນບິນພາກເໜືອ | 1.983 | |
| 2 | ບັນຊາບິນຜ່ານເສັ້ນບິນພາກໃຕ້ | 6.123 | |
| **ລວມທັງໝົດ:** | | **8.106** | **2.223.130** |

*(ລາຍຮັບດັ່ງກ່າວມີຈຳນວນເພີ່ມຂຶ້ນ ຖ້າທຽບໃສ່ເດືອນຜ່ານມາຈຳນວນ 2.161.530 USD).*

- **ກອງຄຸ້ມຄອງສະໜາມບິນ:**
  - ¤ ສະຫລຸບການເກັບລາຍຮັບຈາກການບໍລິການສະໜາມບິນ ສຳລັບເດືອນ 1/2010:

| ລ/ດ | ລາຍລະອຽດ | ຫົວໜ່ວຍ | ສາຍພາຍໃນປະເທດ | ສາຍຕ່າງປະເທດ | ເປັນເງິນໂດລາ | ເປັນເງິນກີບ |
|---|---|---|---|---|---|---|
| 1 | ຍົນຂຶ້ນ-ລົງເດີ່ນ<br>*(ປະຕິບັດຜ່ານມາ)* | ຖ້ຽວ | 962<br>*(1.025)* | 1.153<br>*(1.266)* | | |
| 2 | ຜູ້ໂດຍສານເຂົ້າ-ອອກ<br>*(ປະຕິບັດຜ່ານມາ)* | ຄົນ | 27.021<br>*(29.233)* | 71.416<br>*(73.356)* | | |
| **ລວມການເກັບລາຍຮັບ**<br>*(ປະຕິບັດຜ່ານມາ)* | | | | | **158.413**<br>*(151.436)* | **446.618.146**<br>*(367.222.374)* |

*(ຈຳນວນຖ້ຽວບິນ, ຜູ້ໂດຍສານ ແລະລາຍຮັບເພີ່ມຂຶ້ນ ຖ້າທຽບໃສ່ເດືອນຜ່ານມາ).*

- **ຂົງເຂດເຄຫາ-ຜັງເມືອງ ແລະສະຖາບັນ ຍທຂ:**
  - ສຳເລັດການຈັດຝຶກອົບຮົມກ່ຽວກັບການວາງທໍ່ ແລະການຄວບຄຸມນ້ຳຮົ່ວໄຫລຢູ່ແຂວງຈຳປາສັກ ໃຫ້ພະນັກງານລັດວິສາຫະກິດນ້ຳປະປາຂອງແຂວງສາລະວັນ, ຈຳປາສັກ, ເຊກອງ ແລະອັດຕະປື, ໂດຍມີຜູ້ເຂົ້າຮ່ວມທັງໝົດ 15 ຄົນ.
  - ສຳເລັດການຈັດກອງປະຊຸມສຳມະນາກ່ຽວກັບລະບຽບການຄວບຄຸມອາຄານຢູ່ ສປປ ລາວ, ໂດຍຮ່ວມກັບກະຊວງທີ່ດິນ, ໂຄງລ່າງ, ຂົນສົ່ງ ແລະທ່ອງທ່ຽວຂອງປະເທດຍີ່ປຸ່ນ, ໃນວັນທີ 15/1/2010.
  - ໄດ້ຈັດກອງປະຊຸມປຶກສາຫາລື ແກ້ໄຂສະພາບນ້ຳຖ້ວມບ້ານເຮືອນຂອງປະຊາຊົນຢູ່ໜ່ວຍ 9, ຮ່ອມ 6, ບ້ານໂພນຕ້ອງຈອມມະນີ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ.
  - ຜົນສຳເລັດ ແລະຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຕ່າງໆ:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 1/2010 | ປະຕິບັດໄດ້ 2/2010 | ໝາຍເຫດ |
|---|---|---|---|---|
| 1 | ໂຄງການນ້ຳປະປາພາກເໜືອ-ພາກກາງ | 69,00% | 69,00% | (ບໍ່ຄືບໜ້າ) |
| ▪ ໂຄງການ MIREP: | | | | |
| 2 | ການກໍ່ສ້າງລະບົບນ້ຳປະປາຂະໜາດນ້ອຍຢູ່ກຸ່ມບ້ານທ່າບົກ, ປ່າໄລ່ ແລະອຸດົມໄຊ, ຂ.ບໍລິຄຳໄຊ | 55,00% | 55,00% | (ບໍ່ຄືບໜ້າ) |

| | | | | |
|---|---|---|---|---|
| 3 | ການກໍ່ສ້າງລະບົບນ້ຳປະປາຂະໜາດນ້ອຍຢູ່ກຸ່ມບ້ານ ນາມອນ, ໂພນສະຫວ່າງ, ນ້ຳງາດ ແລະວັງວຽງ, ແຂວງວຽງຈັນ | - | 20,00% | |
| 4 | ການກໍ່ສ້າງລະບົບນ້ຳປະປາຂະໜາດນ້ອຍຢູ່ບ້ານທົ່ງ ແປ, ນາແປ ແລະໜອງອໍ້, ແຂວງບໍລິຄຳໄຊ | (ສຳເລັດການສຳຫລວດອອກແບບລະອຽດແລ້ວ) | | |
| 5 | ໂຄງການທົດລອງການຄຸ້ມຄອງ ແລະບຳບັດນ້ຳເປື້ອນ ຢູ່ເມືອງຫີນເຫີບ ແຂວງວຽງຈັນ | (ສຳເລັດຂັ້ນຕອນການກະກຽມເອກະສານ) | | |
| 6 | ໂຄງການທົດລອງການຄຸ້ມຄອງ ແລະບຳບັດນ້ຳເປື້ອນ ຢູ່ເມືອງທ່າບົກ ແຂວງບໍລິຄຳໄຊ | (ກຳລັງກະກຽມຄັດເລືອກບໍລິສັດທີ່ປຶກສາ) | | |
| ▪ **ໂຄງການ UN-HABITAT:** | | | | |
| 7 | ໂຄງການຮ່ວມມືກັບ UN-Habitat ໂດຍການມີສ່ວນ ຮ່ວມຂອງຊຸມຊົນຢູ່ເມືອງພີນ ສະຫວັນນະເຂດ | 95,00% | 100% | |
| 8 | ໂຄງການນ້ຳປະປາ ແລະສຸຂະພິບານຊຸມຊົນ ເມືອງ ວິລະບູລີ ແຂວງສະຫວັນນະເຂດ | 20,00% | 25,00% | (ບໍ່ຄືບໜ້າ) |
| 9 | ໂຄງການນ້ຳປະປາ ແລະສຸຂະພິບານຊຸມຊົນໜອງບົວ ໜອງແວງ ເມືອງປາກຊັນ ແຂວງບໍລິຄຳໄຊ | 17,00% | 20,00% | |
| 10 | ໂຄງການນ້ຳປະປາ ແລະສຸຂະພິບານຊຸມຊົນ ເມືອງ ພຽງ ແຂວງໄຊຍະບູລີ | 10,00% | 15,00% | |

- **ຂົງເຂດໂຍທາທິການທາງນ້ຳ:**
  - ໄດ້ໄປກວດກາ ແລະເກັບກຳຂໍ້ມູນການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນຂອງຝ່າຍໄທ ຢູ່ປາກນ້ຳມູນ ແຂວງອຸດົມໄຊ.
  - ໄດ້ຕ້ອນຮັບ ແລະເຮັດວຽກກັບຄະນະຊ່ຽວຊານ ຈາກສະຖາບັນພັດທະນາເຂດຊາຍຝັ່ງທະເລຂອງຍີ່ປຸ່ນ ເພື່ອສຶກສາຄົ້ນຄວ້າກ່ຽວກັບການຂົນສົ່ງຕາມລຳແມ່ນ້ຳຂອງ.
  - ການຈັດຕັ້ງປະຕິບັດບັນດາໂຄງການປ້ອງກັນຕະຝັ່ງເຈື່ອນຕາມຈຸດຕ່າງໆມາຮອດປະຈຸບັນ ມີດັ່ງນີ້:

| ລ/ດ | ລາຍລະອຽດໂຄງການ | ປະຕິບັດໄດ້ 12/2009 | ປະຕິບັດໄດ້ 1/2010 | ໝາຍເຫດ |
|---|---|---|---|---|
| 1 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນດອກງິ້ວຄຳ (ດອນຊາວ-ບ້ານຄວ້ານ), ລວງຍາວ 7 ກມ | 10,47% | 10,47% | (ບໍ່ຄືບໜ້າ) |
| 2 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນເຂດສະຖາບັນ ການເມືອງການປົກຄອງແຫ່ງຊາດ,ລວງຍາວ 249 ມ | 70,00% | 70,00% | (ບໍ່ຄືບໜ້າ) |
| 3 | ໂຄງການພັດທະນາແຄມຂອງແຕ່ເກົ້າລ້ຽວ-ຫລັກ 3 | - | 12,50% | |
| 4 | ໂຄງການສ້ອມແປງສູນເດີນເຮືອ ກມ 19 | - | 45,00% | |
| 5 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນເຂດບ້ານດອນ ຊຽວ ແລະບ້ານຊຽງຫວາງ, ມ.ໜອງບົກ, ຂ.ຄຳມ່ວນ | (ກຳລັງລົງມືກໍ່ສ້າງ) | | |
| 6 | ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນເຂດບ້ານຫົວ ໂຂງພະໄຫຍ່, ຂ.ຈຳປາສັກ | (ກຳລັງລົງມືກໍ່ສ້າງ) | | |

- **ຂົງເຂດທາງລົດໄຟ:**
  - ໄດ້ປະຕິບັດການແລ່ນລົດໄຟລະຫວ່າງທ່ານາແລ້ງ-ໜອງຄາຍ (ໄທ) ຢ່າງເປັນປົກກະຕິ, ສະຫລຸບຈຳນວນຜູ້ໂດຍສານທີ່ໃຊ້ບໍລິການລົດໄຟລາວ-ໄທ ແຕ່ວັນທີ 1-31/1/2010 ທັງໝົດ 3.484 ຄົນ (ຂາເຂົ້າ: 1.974 ຄົນ ແລະຂາອອກ: 1.510 ຄົນ, ຫລຸດລົງຈາກເດືອນຜ່ານມາທີ່ມີຈຳນວນ 3.591 ຄົນ).
  - ໄດ້ພົບປະ ແລະເຮັດວຽກຮ່ວມກັບບໍລິສັດ Seoul Metro ຂອງ ສ.ເກົາຫລີ ທີ່ສະເໜີເຈດຈຳນົງຂໍລົງທຶນສຳຫລວດ ແລະກໍ່ສ້າງທາງລົດໄຟໃນ ສປປ ລາວ.
  - ໄດ້ຈັດປະຊຸມຮ່ວມກັບຄະນະຮ່ວມມືລາວ-ຈີນ ເພື່ອສະເໜີແຜນການລວມຂອງຂະແໜງ ຍທຂ ໃນການສະເໜີການຮ່ວມມືກັບ ສປ ຈີນ, ໃນວັນທີ 4/2/2010.
  - ໄດ້ຈັດກອງປະຊຸມຮັບຟັງການລາຍງານຂອງບໍລິສັດທີ່ປຶກສາ (TEAM) ຂອງໄທກ່ຽວກັບຄວາມຄືບໜ້າໂຄງການການອອກແບບລະອຽດທາງລົດໄຟໄລຍະ II ແຕ່ທ່ານາແລ້ງ ທາສະຖານີວຽງຈັນ, ລວງຍາວ 9 ກິໂລແມັດ ແລະຮັບຟັງການລາຍງານຂອງໜ່ວຍງານສຳຫລວດຂອງອົງການ JICA ກ່ຽວກັບໂຄງການກໍ່ສ້າງສູນພັກສິນຄ້າ (Container Yard and Logistic Park) ຢູ່ທ່ານາແລ້ງ ນະຄອນຫລວງວຽງຈັນ.
  - ໂຄງການການອອກແບບລະອຽດທາງລົດໄຟໄລຍະ II ແຕ່ທ່ານາແລ້ງ ທາສະຖານີວຽງຈັນ, ລວງຍາວ 9 ກິໂລແມັດ, ປະຕິບັດໄດ້ 64,50% (ຈາກ 50% ໃນເດືອນຜ່ານມາ).

## II. <u>ແຜນວຽກຈຸດສຸມໃນເດືອນ 3/2010.</u>

- ສູ້ຊົນປະຕິບັດໜ້າວຽກຕ່າງໆທີ່ໄດ້ກຳນົດໄວ້ໃນແຜນການສົກປີ 2009-2010 ຂອງຂະແໜງ ຍທຂ ໃຫ້ສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້. ນັບທັງການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້.

- **ຂົງເຂດຂົວທາງ:**
  - ສືບຕໍ່ຕິດຕາມ ແລະຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ໃຫ້ສຳເລັດຕາມແຜນການທີ່ໄດ້ກຳນົດໄວ້.
  - ກະກຽມເຊັນສັນຍາກັບບໍລິສັດ Fujian Construction Engineering (Group) Corp. ຂອງ ສປ ຈີນ ໃນການລົງທຶນສຳຫລວດກໍ່ສ້າງທາງແຕ່ທ່ານາແລ້ງ-ຊຽງຄວນ-ໜາກນາວ-ປາກງື່ມ.
- **ຂົງເຂດຂົນສົ່ງທາງບົກ:**
  - ຈັດກອງປະຊຸມພົບປະ ແລະປຶກສາຫາລືກ່ຽວກັບວຽກງານຂົນສົ່ງທາງບົກລະຫວ່າງລາວ-ຫວຽດນາມ ແລະລາວ-ຈີນ.
  - ສືບຕໍ່ຕິດຕາມ, ຊຸກຍູ້ ແລະຖອດຖອນບົດຮຽນກ່ຽວກັບການຄຸ້ມຄອງການຂົນສົ່ງໂດຍສານລະຫວ່າງແຂວງ, ລະຫວ່າງປະເທດ ແລະການຄຸ້ມຄອງສະຖານີຂົນສົ່ງໂດຍສານຢູ່ບັນດາແຂວງ.
- **ຂົງເຂດການບິນພົນລະເຮືອນ:**
  - ສືບຕໍ່ສົມທົບກັບຊ່ຽວຊານຂອງອົງການການບິນພົນລະເຮືອນສາກົນ (ICAO) ເພື່ອສືບຕໍ່ການຮ່າງແຜນແກ້ໄຂຂໍ້ຄົງຄ້າງເພື່ອສົ່ງໃຫ້ອົງການການບິນພົນລະເຮືອນສາກົນ.
- **ຂົງເຂດເຄຫາ-ຜັງເມືອງ:**
  - ກະກຽມຈັດກອງປະຊຸມຄັ້ງສຸດທ້າຍຢູ່ນະຄອນຫລວງວຽງຈັນ ສຳລັບຄວາມອາດສາມາດໃຫ້ແກ່ພະນັກງານລັດວິສາຫະກິດນ້ຳປະປາ ຂອງອົງການ JICA.
  - ກະກຽມຈັດກອງປະຊຸມເພື່ອປັບປຸງລະບຽບຜັງເມືອງຢູ່ນະຄອນຫລວງວຽງຈັນ ໂດຍການປະສານສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ອພບ.

- **ຂົງເຂດໄຍທາທິການທາງນ້ຳ:**
    - ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການປ້ອງກັນຕະຝັ່ງເຈື່ອນຕາມຈຸດຕ່າງໆ ແລະບັນດາໂຄງການກໍ່ສ້າງທ່າເຮືອ ໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້.
    - ກະກຽມຈັດກອງປະຊຸມເພື່ອຜ່ານບົດລາຍງານການສຶກສາຄວາມເປັນໄປໄດ້ ກ່ຽວກັບການອອກແບບກໍ່ສ້າງທ່າເຮືອຊຽງກົກ, ທ່າເຮືອປາກແບ່ງ ແລະທ່າເຮືອຫລວງພະບາງ.

ດັ່ງນັ້ນ, ຈຶ່ງລາຍສະເໜີຍັງທ່ານເພື່ອຊາບຕາມທາງຄວນດ້ວຍ.

**ລັດຖະມົນຕີວ່າການ**

ສົມມາດ ພົລເສນາ